ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

749-----

ເລກທີ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 07 ກຸມພາ 2025

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບ
## ຂອງລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມວິສາມັນຄະນະປະຈຳພັກກະຊວງສຶກສາທິການ ແລະ ກິລາ ວັນທີ 13 ມັງກອນ 2025.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

**ມາດຕາ 1:** ການແບ່ງຄວາມຮັບຜິດຊອບ ຂອງລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ດັ່ງນີ້:

**1.1 ທ່ານ ຮສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີ**

ມີໜ້າທີ່ຮັບຜິດຊອບລວມໂດຍກົງ ແລະ ຮອບດ້ານຕໍ່ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານ ພັດທະນາຊັບພະຍາກອນມະນຸດ, ວຽກງານສຶກສາ, ວິທະຍາສາດ ແລະ ວຽກງານກິລາ-ກາຍຍະກຳ ຂອງຊາດ, ຊີ້ນຳວຽກງານການເມືອງ-ແນວຄິດ, ການປັບປຸງ ແລະ ການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ຕາມແນວທາງນະໂຍບາຍ ຂອງພັກ ແລະ ແຜນພັດທະນາເສດຖະກິດ - ສັງຄົມ ຂອງລັດຖະບານ. ມີໜ້າທີ່ ຕາງໜ້າໃຫ້ຄະນະລັດຖະມົນຕີ ລາຍງານຜົນສຳເລັດ, ຂໍ້ຄົງຄ້າງ ແຜນພັດທະນາຊັບພະຍາກອນມະນຸດ ແລະ ແຜນ ພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ແຕ່ລະໄລຍະຕໍ່ສູນກາງພັກ ແລະ ລັດຖະບານ.

- ຊີ້ນຳໂດຍກົງພາກສ່ວນຕ່າງໆລຸ່ມນີ້:
  1) ກົມຈັດຕັ້ງ ແລະ ພະນັກງານ
  2) ກົມການເງິນ
  3) ກົມແຜນການ
  4) ກົມການສຶກສາຊັ້ນສູງ
  5) ວິທະຍາໄລເຕັກນິກລາວ-ເຢຍລະມັນ;
  6) ວິທະຍາໄລເຕັກນິກປາກປ່າສັກ;
  7) ວິທະຍາໄລເຕັກນິກສັບພະວິຊາ;
  8) ວິທະຍາໄລເຕັກນິກກະສິກຳດົງຄຳຊ້າງ;
  9) ວິທະຍາໄລເຕັກນິກວິຊາຊີບການລົດໄຟ;
- ຮັບຜິດຊອບວຽກງານສະເພາະກິດລະດັບຊາດດັ່ງນີ້:

1) ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ;
2) ຮອງປະທານສະພາວິທະຍາສາດແຫ່ງຊາດ;
3) ປະທານຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ;
4) ປະທານຄະນະກຳມາທິການແຫ່ງຊາດ ເພື່ອອີງການອຸຍແນສໂກ;
5) ປະທານຄະນະກຳມະການໂອແລມປິກແຫ່ງຊາດລາວ;
6) ປະທານສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
7) ປະທານກອງທຶນສະຫວັດດີການຄູແຫ່ງຊາດ;
8) ປະທານກອງທຶນກິລາ-ກາຍຍະກຳ;
9) ປະທານກອງທຶນພັດທະນາອາຊີວະສຶກສາ;
10) ຮອງປະທານຄະນະກຳມະການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນສູນກາງ;
11) ປະທານສະພາທີ່ປຶກສາການສຶກສາຊັ້ນສູງແຫ່ງຊາດ;
12) ປະທານສະພາທີ່ປຶກສາອາຊີວະສຶກສາ ແລະ ພັດທະນາສີມືແຮງງານ;
13) ປະທານຄະນະປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ກະຊວງສຶກສາທິການ ແລະ ກິລາ;
14) ປະທານສະມາຄົມມິດຕະພາບລາວ-ຍີ່ປຸ່ນ;
15) ຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ(ປພຍ).

### 1.2 ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີ

ມີໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຊ່ວຍລັດຖະມົນຕີຊີ້ນຳຂົງເຂດ ການພັດທະນາຊັບພະຍາກອນມະນຸດ, ການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ຂອງຊາດ, ເປັນຜູ້ຮັບຜິດຊອບຊີ້ນຳວຽກງານກິລາ-ກາຍຍະກຳ ແລະ ວິຊາການອື່ນໆ ຕາມການມອບໝາຍ ຂອງລັດຖະມົນຕີ ແລະ ມີສິດຮຽກໂຮມປະຊຸມ ແລະ ສ່ອງແສງລາຍງານ ພາກສ່ວນທີ່ຕົນເອງຊີ້ນຳ ແລະ ພາກສ່ວນທີ່ກ່ຽວຂ້ອງ.

- ຊີ້ນຳໂດຍກົງພາກສ່ວນຕ່າງໆລຸ່ມນີ້:
  1) ກົມຮ່ວມມືກັບຕ່າງປະເທດ;
  2) ກົມກິລາລະດັບສູງ;
  3) ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ;
  4) ກົມກິດຈະການນັກສຶກສາ;
  5) ສະຖາບັນກິລາ-ກາຍຍະກຳ;
  6) ສູນເຕັກໂນໂລຊີຂ່າວສານ ແລະ ສື່ສານສຳລັບການສຶກສາ ແລະ ກິລາ;
  7) ສູນການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສ່ຽງໃຕ້;
  8) ຫ້ອງການຄຸ້ມຄອງສະໜາມກິລາແຫ່ງຊາດ (ຫຼັກ 16);
  9) ວິທະຍາໄລພະລະສຶກສາ;
  10) ວິທະຍາໄລສິລະປະສຶກສາ.
- ຮັບຜິດຊອບວຽກງານສະເພາະກິດລະດັບຊາດດັ່ງນີ້:
  1) ຮອງປະທານກອງທຶນກິລາ-ກາຍຍະກຳ;
  2) ຄະນະກຳມະການແຫ່ງຊາດ ເພື່ອຄວບຄຸມຢາສູບແຫ່ງຊາດ;

3) ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ;

4) ຄະນະກຳມະການແຫ່ງຊາດ ວ່າດ້ວຍສິດທິມະນຸດ;

5) ຄະນະກຳມະການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

6) ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ (ຄຊກລ);

7) ຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ລະດັບຊາດ;

8) ຄະນະກຳມະການວຽກງານສານຕ້ອງຫ້າມໃນກິລາ;

9) ຄະນະກຳມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນສູນກາງ;

10)ຄະນະກຳມະການ ເອດສ໌ ແຫ່ງຊາດ;

11)ຄະນະກຳມະການຮ່ວມມືລາວ-ຈີນ;

12)ຄະນະກຳມະການຮ່ວມມືລາວ-ໄທ;

13)ຄະນະກຳມະການ ຄວາມປອດໄພຕາມທ້ອງຖະໜົນ;

14)ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**1.3 ທ່ານ ປອ. ສຳລານ ພັນຄະວົງ ຮອງລັດຖະມົນຕີ**

ມີໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຊ່ວຍລັດຖະມົນຕີຊີ້ນຳຊີ້ນຳຂົງເຂດ ການພັດທະນາຊັບພະຍາກອນມະນຸດ, ການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ຂອງຊາດ, ເປັນຜູ້ຮັບຜິດຊອບຊີ້ນຳວຽກງານກວດກາພັກ, ກວດກາລັດ ແລະ ວິຊາການອື່ນໆ ຕາມການມອບໝາຍ ຂອງລັດຖະມົນຕີ ແລະ ມີສິດຮຽກໂຮມປະຊຸມ ແລະ ສ່ອງແສງລາຍງານພາກສ່ວນທີ່ຕົນເອງຊີ້ນຳ ແລະ ພາກສ່ວນທີ່ກ່ຽວຂ້ອງ;

- ຊີ້ນຳໂດຍກົງພາກສ່ວນຕ່າງໆລຸ່ມນີ້:

1) ກົມກວດກາ;

2) ກົມຄຸ້ມຄອງວິທະຍາສາດ;

3) ຫ້ອງການສະພາວິທະຍາສາດແຫ່ງຊາດ;

4) ກົມປະກັນຄຸນນະພາບການສຶກສາ;

5) ສະຖາບັນພັດທະນາການບໍລິຫານການສຶກສາ

6) ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ;

7) ສຳນັກພິມສຶກສາ ແລະ ກິລາ;

8) ຫ້ອງການກຳມາທິການສຶກສາສົງສູນກາງ;

9) ວິທະຍາໄລສົງ ອົງຕື້;

10) ບໍລິສັດລັດວິສາຫະກິດໂຮງພິມສຶກສາ;

11) ບໍລິສັດລັດວິສາຫະກິດຜະລິດ ແລະ ສະໜອງອຸປະກອນການສຶກສາ;

- ຮັບຜິດຊອບວຽກງານສະເພາະກິດລະດັບຊາດດັ່ງນີ້:

1) ຮອງປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ;

2) ຮອງປະທານສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;

3) ຮອງປະທານຄະນະໂຄງການຊັບສິນມະນຸດຂອງ ສປປ ລາວ;

4) ຮອງປະທານຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ;

5) ຄະນະກຳມະການ ສູນກາງແນວລາວສ້າງຊາດ;

6) ຄະນະກຳມະການຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າແລະ ຄ່າບໍລິການ;

7) ຄະນະກຳມະການປະສານງານລະດັບຊາດວຽກງານປະຊາກອນ ແລະ ການພັດທະນາ;

8) ປະທານຄະນະກຳມະການແຜນການ ແລະ ການເງິນ ຂອງກະຊວງ ສສກ;

9) ປະທານຄະນະກຳມະການຈັດສັນ, ບັນຈຸ ແລະ ສັບຊ້ອນຄູ;

10) ຄະນະກຳມະການຮ່ວມມືລາວ-ຫວຽດນາມ;

11) ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**1.4 ທ່ານ ປອ. ນາງ ດາລາວອນ ກິດຕິພົນ ຮອງລັດຖະມົນຕີ**

ມີໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຊ່ວຍລັດຖະມົນຕີຊີ້ນຳຂົງເຂດການພັດທະນາຊັບພະຍາກອນມະນຸດ, ການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ຂອງຊາດ, ເປັນຜູ້ຮັບຜິດຊອບຊີ້ນຳວຽກງານ ວິທະຍາສາດ ແລະ ວິຊາການອື່ນໆ ຕາມການມອບໝາຍ ຂອງລັດຖະມົນຕີ ແລະ ມີສິດຮຽກໂຮມປະຊຸມ ແລະ ສ່ອງແສງລາຍງານພາກສ່ວນ ທີ່ຕົນເອງຊີ້ນຳ ແລະ ພາກສ່ວນທີ່ກ່ຽວຂ້ອງ.

- ຊີ້ນຳໂດຍກົງພາກສ່ວນຕ່າງໆລຸ່ມນີ້:
  1) ຫ້ອງການກະຊວງ;
  2) ກົມການສຶກສາກ່ອນໄວຮຽນ;
  3) ກົມສາມັນສຶກສາ;
  4) ກົມການສຶກສານອກໂຮງຮຽນ;
  5) ກົມສ້າງຄູ;
  6) ກົມອາຊີວະສຶກສາ;
  7) ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ;
  8) ສະຖາບັນພັດທະນາອາຊີວະສຶກສາ;
  9) ວິທະຍາໄລຄູດົງຄຳຊ້າງ;
  10) ສູນພັດທະນາການສຶກສານອກໂຮງຮຽນ;
  11) ສູນສົ່ງເສີມການສຶກສາຮຽນຮ່ວມ;
  12) ສູນຜູ້ປະກອບກິດຈະການລາວ-ອິນເດຍ;
  13) ໂຮງຮຽນອະນຸບານສຶກສາ.
- **ຊ່ວຍທ່ານລັດຖະມົນຕີຊີ້ນຳ**
  1) ກົມການສຶກສາຊັ້ນສູງ;
  2) ວິທະຍາໄລເຕັກນິກລາວ-ເຢຍລະມັນ;
  3) ວິທະຍາໄລເຕັກນິກປາກປ່າສັກ;
  4) ວິທະຍາໄລເຕັກນິກສັບພະວິຊາ;
  5) ວິທະຍາໄລເຕັກນິກກະສິກຳດົງຄຳຊ້າງ;
  6) ວິທະຍາໄລເຕັກນິກ ວິຊາຊີບການລົດໄຟ;
- ຮັບຜິດຊອບວຽກງານສະເພາະກິດລະດັບຊາດ ດັ່ງນີ້:

1) ຮອງປະທານສະພາການສຶກສາຊັ້ນສູງແຫ່ງຊາດ;

2) ຮອງປະທານກອງທຶນພັດທະນາອາຊີວະສຶກສາ;

3) ຮອງປະທານກຳມະການແຫ່ງຊາດຂອງໂຄງການບ້ານຊ່ວຍເຫຼືອເດັກ SOS;

4) ຄະນະກຳມາທິການຄວບຄຸມໄພພິບັດລະດັບຊາດທັງເປັນປະທານຄະນະກຳມາການຄຸ້ມຄອງໄພພິບັດກະຊວງສຶກສາທິການ ແລະ ກິລາ;

5) ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກ ແຫ່ງຊາດ, ທັງເປັນປະທານເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກ ຂອງກະຊວງ ສສກ;

6) ຮອງຫົວໜ້າຄະນະຮັບຜິດຊອບຈັດງານບຸນມະໂຫລານປຶ້ມ ແລະ ສົ່ງເສີມການອ່ານແຫ່ງຊາດ;

7) ຄະນະກຳມະການ ເພື່ອຄົນພິການ ຂັ້ນສູນກາງ;

8) ຄະນະກຳມະການແຫ່ງຊາດ ດ້ານໂພຊະນາການແຫ່ງຊາດ;

9) ຄະນະກຳມະການວຽກງານສະຖິຕິແຫ່ງຊາດ;

10)ຄະນະກຳມະການສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ;

11)ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 2** ການຊີ້ນຳການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ມອບໃຫ້ບັນດາທ່ານຮອງລັດຖະມົນຕີ ຊີ້ນຳໂດຍກົງ ຕາມສາຍບໍລິຫານ ແລະ ວິຊາການ, ການປະຕິບັດຕົວຈິງ ຕ້ອງລາຍງານຄວາມຄືບໜ້າ ຕໍ່ກອງປະຊຸມຄະນະລັດຖະມົນຕີ ແລະ ກອງປະຊຸມຄະນະນຳບໍລິຫານລັດ ລະດັບກະຊວງເປັນປົກກະຕິ.

**ມາດຕາ 3** ແບບແຜນ ແລະ ວິທີເຮັດວຽກຂອງລັດຖະມົນຕີ ແລະ ຮອງລັດຖະມົນຕີ ແມ່ນປະຕິບັດຕາມຫຼັກການລວມ ສູນປະຊາທິປະໄຕ, ປະຕິບັດລະບອບຫົວໜ້າດຽວ, ເຮັດວຽກເປັນໝູ່ຄະນະ, ມີຄວາມເປັນເອກະພາບ ແລະ ຮັບຜິດຊອບຮ່ວມກັນໃນທຸກວຽກງານ ແລະ ແບ່ງໜ້າທີ່ຄວາມຮັບຜິດຊອບ ໃຫ້ບຸກຄົນຊ່ວຍຊີ້ນຳ ແລະ ຊີ້ນຳ ໂດຍກົງ.

**ມາດຕາ 4** ມອບໃຫ້ບັນດາຫົວໜ້າຫ້ອງການ, ຫົວໜ້າກົມ, ອະທິການບໍດີ, ຜູ້ອຳນວຍການສະຖາບັນ, ວິທະຍາໄລ ແລະ ສູນ , ຫົວໜ້າພະແນກສຶກສາທິການ ແລະ ກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງ ຂອງ ລັດຖະມົນຕີ ສະບັບເລກທີ 2387/ສສກ, ລົງວັນທີ 30 ກັນຍາ 2024.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ★ ລັດຖະມົນຕີ ★

ຮສ. ປອ. ພຸດ ສິມມາລາວົງ

ປ່ອນສົ່ງ:

- ລັດຖະມົນຕີ ແລະ ຮອງລັດຖະມົນຕີ ທ່ານລະ 1 ສະບັບ
- ຫ້ອງການ, ກົມ, ອົງການທຽບເທົ່າກົມ, ສຳນັກພິມ, ສູນພາກສ່ວນລະ 1 ສະບັບ
- ມະຫາວິທະຍາໄລ 4 ແຫ່ງ, ວິທະຍາໄລ, ໂຮງຮຽນ, ພາກສ່ວນລະ 1 ສະບັບ
- ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫລວງ ພາກສ່ວນລະ 1 ສະບັບ